ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

-----000-----

ກະຊວງກະສິກຳ ແລະ ປ່າໄມ້

ກົມປ່າໄມ້

ເລກທີ 145/ປມ.2001

ວຽງຈັນ, ວັນທີ 25.1.2001

# <u>ຂໍ້ແນະນຳ</u>

# ວິທີການຈັດຕັ້ງປະຕິບັດ

# ເພື່ອດັດສົມໂຮງງານປຸງແຕ່ງໄມ້ ແລະ ຜະລິດຕະຜົນປ່າໄມ້

ເຖິງ : ຂະແໜງປ່າໄມ້ແຂວງ, ກຳແພງນະຄອນ ແລະ ເຂດພິເສດ

- ອີງຕາມຄຳສັ່ງຂອງນາຍົກລັດຖະມົນຕີ ສະບັບເລກທີ 10/ນຍ, ລົງວັນທີ 04/10/2000, ວ່າດ້ວຍການຄຸ້ມຄອງປ່າໄມ້ ແລະ ທຸລະກິດໄມ້.
- ອີງຕາມລະບຽບການຂອງກະຊວງກະສິກຳ ແລະ ປ່າໄມ້, ສະບັບເລກທີ 0261/ກປ.2000, ລົງວັນທີ 30/11/2000, ວ່າດ້ວຍການຄຸ້ມຄອງໂຮງງານປຸງແຕ່ງໄມ້ ແລະ ຜະລິດຕະຜົນປ່າໄມ້
- ອີງຕາມຄຳສັ່ງແນະນຳຂອງລັດຖະມົນຕີວ່າການກະຊວງກະສິກຳ ແລະ ປ່າໄມ້, ສະບັບເລກທີ 0267/ກປ.2000, ລົງວັນທີ 13/12/2000, ວ່າດ້ວຍການດັດສົມ ແລະ ມາດຖານ ສຳລັບໂຮງງານປຸງແຕ່ງໄມ້ ແລະ ຜະລິດຕະຜົນປ່າໄມ້

ເພື່ອເຮັດໃຫ້ຄຳສັ່ງ ແລະ ລະບຽບການກ່ຽວກັບການຄຸ້ມຄອງ, ການດັດສົມ ແລະ ມາດຖານ ໂຮງງານດັ່ງກ່າວມາຂ້າງເທິງນັ້ນໄດ້ຮັບການຈັດຕັ້ງປະຕິບັດຢ່າງຖືກຕ້ອງສອດຄ່ອງ, ມີຄວາມເປັນເອກະພາບດ້ານທັດສະນະ, ວິທີການ, ຮັກສາໄດ້ເຊິ່ງຄວາມສາມັກຄີ ບົນພື້ນຖານແນວທາງນະໂຍບາຍຂອງພັກ ແລະ ລັດຖະບານ, ພ້ອມກັນນັ້ນກໍ່ເພື່ອໃຫ້ສາມາດຄັດເລືອກໄດ້ໂຮງງານປຸງແຕ່ງໄມ້ທີ່ມີປະສິດທິຜົນສູງ ທາງດ້ານ ເສດຖະກິດ ແລະ ສົມດຸນກັບຄວາມອາດສາມາດຕອບສະໜອງຂອງແຫຼ່ງວັດຖຸດິບ.

## ກົມປ່າໄມ້ອອກຂໍ້ແນະນຳດັ່ງນີ້:

1. ຂະແໜງປ່າໄມ້ແຂວງ, ກຳແພງນະຄອນ ແລະ ເຂດພິເສດ ສົມທົບກັບຂະແໜງທີ່ກ່ຽວຂ້ອງ, ພະແນກກະສິກຳ ແລະ ປ່າໄມ້ແຂວງ ແລະ ອຳນາດການປົກຄອງແຂວງ, ເພື່ອດຳເນີນການດັດສົມໂຮງງານປຸງແຕ່ງໄມ້ ແລະ ຜະລິດຕະຜົນປ່າໄມ້, ຕາມບາດກ້າວ ແລະ ວິທີການດັ່ງຕໍ່ລົງໄປນີ້:

## ບາດກ້າວ I. ປະສານສົມທົບກັບພາກສ່ວນກ່ຽວຂ້ອງ

1. ສົມທົບກັບພະແນກກະສິກຳ ແລະ ປ່າໄມ້ແຂວງ, ອຳນາດການປົກຄອງແຂວງ ແລະ ຂະແໜງການທີ່ກ່ຽວຂ້ອງ ເຊັ່ນ: ພະແນກການເງິນແຂວງ, ພະແນກອຸດສາຫະກຳ ແລະ ຫັດຖະກຳ, ພະແນກການຄ້າ ແລະ ທ່ອງທ່ຽວ ແລະ ອື່ນໆ, ທັງນີ້ ເພື່ອສະເໜີ, ລາຍງານ ໃຫ້ຮັບຊາບກ່ຽວກັບຈຸດປະສົງ ແລະ ເປົ້າໝາຍຂອງການດັດສົມໂຮງງານປຸງແຕ່ງໄມ້ ແລະ ຜະລິດຕະພັນໄມ້ ພ້ອມກັນນັ້ນ ກໍເປັນການປຶກສາຫາລື ແລະ ສ້າງຄວາມເປັນເອກພາບ ກ່ຽວກັບວິທີການຈັດຕັ້ງປະຕິບັດວຽກງານດັ່ງກ່າວ.
2. ສະເໜີໃຫ້ມີການສ້າງຕັ້ງຄະນະກຳມະການ ເພື່ອເຮັດການດັດສົມໂຮງງານ, ໂດຍແມ່ນ ຫົວໜ້າຂະແໜງປ່າໄມ້ແຂວງ ເປັນຫຼັກໃນການຈັດຕັ້ງປະຕິບັດ ພາຍໃຕ້ການເປັນປະທານຂອງ ຫົວໜ້າພະແນກກະສິກຳ ແລະ ປ່າໄມ້ແຂວງ.
3. ຄັດເລືອກພະນັກງານປ່າໄມ້ໃນຈຳນວນຕາມຄວາມເໝາະສົມ ໃນແຕ່ລະແຂວງ ແລະ ຈັດຕັ້ງເປັນໜ່ວຍງານວິຊາການ ເພື່ອເຄື່ອນໄຫວເກັບກຳຂໍ້ມູນບັນດາໂຮງງານປຸງແຕ່ງໄມ້ ແລະ ຜະລິດຕະພັນປ່າໄມ້ທັງໝົດ, ຕາມຮ່າງຕາຕະລາງທີ່ໄດ້ກະກຽມໄວ້ແລ້ວ.

## ບາດກ້າວ II. ກະກຽມເອກະສານ, ພະນັກງານວິຊາການ ແລະ ເຊື່ອມຊຶມມະຕິຄຳສັ່ງຕ່າງໆ.

1. ເຊື່ອມຊຶມຂໍ້ກຳນົດກົດລະບຽບ ແລະ ບັນດາມະຕິຄຳສັ່ງຕ່າງໆຂອງພັກ ແລະ ລັດຖະບານ ທີ່ກ່ຽວພັນກັບການດັດສົມໂຮງງານປຸງແຕ່ງໄມ້ ແລະ ຜະລິດຕະພັນໄມ້ເຊັ່ນ:
   (ກ) ກົດໝາຍປ່າໄມ້ (ຄັດເລືອກເອົາມາດຕາທີ່ມີສ່ວນພົວພັນ)
   (ຂ) ຄຳສັ່ງຂອງນາຍົກລັດຖະມົນຕີ ສະບັບເລກທີ 10/ນຍ, ລົງວັນທີ 04/10/2000, ວ່າດ້ວຍການຄຸ້ມຄອງວຽກງານປ່າໄມ້ ແລະ ທຸລະກິດໄມ້.
   (ຄ) ຄຳສັ່ງແນະນຳຂອງລັດຖະມົນຕີວ່າການກະຊວງກະສິກຳ ແລະ ປ່າໄມ້, ສະບັບເລກທີ 0267/ກປ.2000, ລົງວັນທີ 13/12/2000, ວ່າດ້ວຍການດັດສົມ ແລະ ມາດຖານສຳລັບການດັດສົມໂຮງງານ ປຸງແຕ່ງໄມ້ ແລະ ຜະລິດຕະພັນປ່າໄມ້.
   (ງ) ລະບຽບການວ່າດ້ວຍການຄຸ້ມຄອງໂຮງງານປຸງແຕ່ງໄມ້ ແລະ ຜະລິດຕະພັນປ່າໄມ້ສະບັບເລກທີ 0261/ກປ.2000 ແລະ ອື່ນໆ, ແລະ
   (ຈ) ແນະນຳຂະບວນການເກັບກຳຂໍ້ມູນ ເຊັ່ນ:ວິທີການ ແລະ ເຕັກນິກໃນການເກັບກຳຂໍ້ມູນ, ວິທີສຳພາດ ແລະ ການນຳໃຊ້ຄຳຖາມເຈາະຈີ້ມ ແລະ ຄວາມໝາຍຂອງຄຳຖາມເຈາະຈີ້ມແຕ່ລະອັນ.
2. ເຮັດການທົດລອງສຳພາດ ເພື່ອເປັນຕົວຢ່າງໃຫ້ແກ່ພະນັກງານເກັບກຳຂໍ້ມູນ ທັງນີ້ ເພື່ອປະເມີນຜົນຄວາມເຂົ້າໃຈຂອງພະນັກງານ ແລະ ສ້າງຄວາມໝັ້ນໃຈໃຫ້ແກ່ການເກັບກຳຂໍ້ມູນທີ່ຖືກຕ້ອງ.
3. ກະກຽມເອກະສານ, ຄຳຖາມເຈາະຈີ້ມໃຫ້ພຽງພໍສຳລັບໂຮງງານປຸງແຕ່ງໄມ້ ແລະ ຜະລິດຕະພັນໄມ້ທັງໝົດ.

## ບາດກ້າວ III. ເຊື່ອມຊຶມ ແລະ ລຸລ່ວງບັນດາໂຮງງານປຸງແຕ່ງໄມ້ ແລະ ຜະລິດຕະພັນປ່າໄມ້.

1. ເຊື່ອມຊຶມຂໍ້ກໍານົດກົດລະບຽບ ແລະ ບັນດາມະຕິຄໍາສັ່ງຕ່າງໆຂອງພັກ ແລະ ລັດຖະບານ ທີ່ກ່ຽວພັນກັບການດັດສົມໂຮງງານປຸງແຕ່ງໄມ້ ແລະ ຜະລິດຕະພັນໄມ້ໃຫ້ຜູ້ອໍານວຍການ ຫຼື ເຈົ້າຂອງໂຮງງານ ເຊັ່ນ:
   (ກ) ກົດໝາຍປ່າໄມ້ (ຄັດເລືອກເອົາມາດຕາທີ່ມີສ່ວນພົວພັນ)
   (ຂ) ຄໍາສັ່ງຂອງນາຍົກລັດຖະມົນຕີ ສະບັບເລກທີ 10/ນຍ, ລົງວັນທີ 04/10/2000, ວ່າດ້ວຍການຄຸ້ມຄອງວຽກງານປ່າໄມ້ ແລະ ທຸລະກິດໄມ້.
   (ຄ) ຄໍາສັ່ງແນະນໍາຂອງລັດຖະມົນຕີວ່າການກະຊວງກະສິກໍາ ແລະ ປ່າໄມ້, ສະບັບເລກທີ 0267/ກປ.2000, ລົງວັນທີ 13/12/2000, ວ່າດ້ວຍການດັດສົມ ແລະ ມາດຖານສໍາລັບການດັດສົມໂຮງງານ ປຸງແຕ່ງໄມ້ ແລະ ຜະລິດຕະພັນປ່າໄມ້.
   (ງ) ລະບຽບການວ່າດ້ວຍການຄຸ້ມຄອງໂຮງງານປຸງແຕ່ງໄມ້ ແລະ ຜະລິດຕະພັນປ່າໄມ້ສະບັບເລກທີ 0261/ກປ.2000 ແລະ ອື່ນໆ, ແລະ
2. ແນະນໍາໃຫ້ບັນດາຜູ້ອໍານວຍການ ແລະ ເຈົ້າຂອງໂຮງງານກະກຽມຂໍ້ມູນຂອງໂຮງງານຢ່າງຄົບຖ້ວນ.

<u>ໝາຍເຫດ:</u> ການເຊື່ອມຊຶມໃນຂັ້ນນີ້ແມ່ນຫ້າມພະນັກງານລົງເຜີຍແຜ່ເວົ້າເຖິງເລື່ອງການດັດສົມໂຮງງານ.

## ບາດກ້າວ IV. ຈັດຕັ້ງປະຕິບັດການສໍາພາດເກັບກໍາຂໍ້ມູນຕົວຈິງ

1. ແບ່ງເຂດ ແລະ ຈໍານວນໂຮງງານໃຫ້ແກ່ພະນັກງານວິຊາການ ຮັບຜິດຊອບສໍາພາດ ແລະ ເກັບກໍາຂໍ້ມູນຢ່າງລະອຽດ
2. ພະນັກງານທີ່ຈະລົງສໍາພາດ ແລະ ເກັບກໍາຂໍ້ມູນ, ຈະຕ້ອງຮັບຮູ້ຕົວເລກໂຮງງານປຸງແຕ່ງໄມ້ ແລະ ຜະລິດຕະພັນໄມ້ ທັງໝົດທີ່ມີຢູ່ໃນເຂດຕົນຮັບຜິດຊອບ (ທັງໂຮງງານທີ່ໄດ້ຮັບອະນຸຍາດ ແລະ ບໍ່ໄດ້ຮັບອະນຸຍາດ) ໂດຍສົມທົບກັບໜ່ວຍງານປ່າໄມ້ເມືອງ ແລະ ອໍານາດການປົກຄອງເມືອງທີ່ກ່ຽວຂ້ອງ.
3. ຈັດແບ່ງເວລາຂອງການສໍາພາດ ພ້ອມກັບນໍາສະເໜີຕໍ່ເຈົ້າຂອງໂຮງງານ ຫຼື ຜູ້ອໍານວຍການ ເພື່ອນັດໝາຍເວລາສໍາພາດຢ່າງຄັກແນ່.
4. ສໍາພາດ ແລະ ເກັບກໍາຂໍ້ມູນຕາມຄໍາຖາມເຈາະຈີ້ມ. (ສໍາພາດໂຮງງານໃດ, ການສໍາພາດ ຈະຕ້ອງຈັດຂື້ນໃນທີ່ໂຮງງານນັ້ນ) ວິທີຂອງການສໍາພາດ ແລະ ເກັບກໍາຂໍ້ມູນຈະຕ້ອງປະຕິບັດດັ່ງນີ້:
   - ຖາມຕາມຄໍາຖາມເຈາະຈີ້ມທີ່ໄດ້ກະກຽມໄວ້ລ່ວງໜ້າແລ້ວ.
   - ກວດກາເບິ່ງໃບອະນຸຍາດ ແລະ ເອກະສານປະກອບຕ່າງໆຂອງໂຮງງານ
   - ສັງເກດເບິ່ງໂຄງສ້າງ, ເຄື່ອງຈັກ ແລະ ໂຄງປະກອບອື່ນໆຂອງໂຮງງານຕົວຈິງ
   - ໃຫ້ມີການທົດລອງຜະລິດ ແລະ ປຸງແຕ່ງ (ຖ້າມີຄວາມຈໍາເປັນ)

5. ກວດກາຂໍ້ມູນທີ່ໄດ້ ຕ້ອງໃຫ້ເຈົ້າຂອງໂຮງງານເຊັນ ແລະ ເປັນສັກຂີພາບ. ຖ້າຫາກວ່າຂໍ້ມູນທີ່ໄດ້ບໍ່ ຖືກຕ້ອງແທ້, ພະແນກໃຫ້ເຈົ້າຂອງໂຮງງານເຊັນຮັບ [illegible] ຜູ້ກວດການຳພາແນວ.

6. ໜ່ວຍງານປ່າໄມ້ເມືອງ, ຫົວໜ້າຫ້ອງການກະສິກຳ ແລະ ປ່າໄມ້ເມືອງ, ຂະແໜງປ່າໄມ້ແຂວງ ແລະ ພະແນກກະສິກຳ ແລະ ປ່າໄມ້ແຂວງ ກວດກາຂໍ້ມູນດັ່ງກ່າວ, ເມື່ອເຫັນວ່າຖືກຕ້ອງ ແລ້ວເຊັນຮັບຮູ້ ແລະ ຢັ້ງຢືນ

## ບາດກ້າວ V. ສັງລວມ ແລະ ກວດກາຂໍ້ມູນທັງໝົດ

### 1. ສັງລວມຂໍ້ມູນປ່າຜະລິດຂອງແຂວງ

ກວດກາ ແລະ ກວດການຄືນດ້ານເນື້ອທີ່ປ່າຜະລິດຕົວຈິງພາຍໃນແຂວງ.

### 2. ສັງລວມຂໍ້ມູນຂອງໂຮງງານປຸງແຕ່ງໄມ້ທັງໝົດ

ກ. ຂະແໜງປ່າໄມ້ແຂວງສັງລວມ ແລະ ກວດກາ ທັງໝົດຂໍ້ມູນທີ່ໄດ້ມານັ້ນ (ສັງລວມເຂົ້າຄອມພິວເຕີສຳລັບແຂວງທີ່ມີເງື່ອນໄຂ) ຢ່າງຮອບຄອບ ແລະ ຊັດເຈນ. ຖ້າຫາກມີຄວາມຈຳເປັນກໍຕ້ອງລົງກວດກາໂຮງງານຕົວຈິງ.

ຂ. ນຳສົ່ງປື້ມຂໍ້ມູນທີ່ເຊັນຮັບຮອງທັງໝົດນັ້ນໃຫ້ກົມປ່າໄມ້ ໂຮງງານລະ 1 ຊຸດ ແລະ ສຳເນົາໄວ້ແຂວງ, ເພື່ອການວິໄຈ, ຄົ້ນຄວ້າ ແລະ ປຸບປຸງການມາດຖານຂອງການດັດສົມໂຮງງານຕາມຄຳສັ່ງແນະນຳສະບັບເລກທີ 0267/ກປ.2000, ລົງວັນທີ 13/12/2000 ແລະ ນຳສະເໜີຜົນຂອງການຄົ້ນຄວ້າ ແລະ ວິໄຈນີ້ຕໍ່ ກະຊວງກະສິກຳ ແລະ ປ່າໄມ້ ເພື່ອພິຈາລະນາ ແລະ ຕົກລົງ.

2. ມອບໃຫ້ຂະແໜງປ່າໄມ້ແຂວງ, ກຳແພງນະຄອນ ແລະ ເຂດພິເສດ ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ແລະ ເປັນເຈົ້າການໃນການຈັດຕັ້ງປະຕິບັດວຽກງານດັ່ງກ່າວໃຫ້ປະກົດຜົນເປັນຈິງ ແລະ ສຳເລັດກ່ອນວັນທີ 1/4/2001..

3.. ໃນໄລຍະຈັດຕັ້ງປະຕິບັດ, ໃຫ້ລາຍງານຜົນຄືບໜ້າຂອງວຽກດັ່ງກ່າວໃຫ້ກົມປ່າໄມ້ເປັນໄລຍະ ເພື່ອຮັບຊາບ ແລະ ຂໍທິດຊີ້ນຳເພີ່ມເຕີມ.

4. ຂໍ້ແນະນຳສະບັບນີ້ມີຜົນສັກສິດ ແລະ ບັງຄັບໃຊ້ນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

ຫົວໜ້າກົມປ່າໄມ້

ແຊ້ມ ຊາມົນຕີ